Education
Public Schools






# ຂໍ້ມູນເລື້ອງຄວາມປອດໄພຕາມ ທ້ອງຖນົນ

ທ່ານມີໜ້າທີ່ຮັບຜິດຊອບໃນ ຄວາມປອດໄພຂອງລູກທ່ານໃນເວລາທີ່ພວກເຂົາເດີນທາງໄປໂຮງ ຮຽນທັງໄປແລະກັບ.

## ຍ່າງແບບປອດໄພ

ຈັບມືລູກທ່ານຢູ່ສເມີ – ເວລາຍ່າງຢູ່ ຕາມທາງຍ່າງ, ຢູ່ລານຈອດຣົດ ແລະ ເວລາຂ້າມຖນົນ – ຈົນກວ່າ ພວກເຂົາມີ ອາຍຸຢ່າງໜ້ອຍ8ປີ.

ໃນເວລາທີ່ລູກທ່ານມີອາຍຸລະ ຫວ່າງ 8ຫາ10ປີ, ຈົ່ງຄວບຄຸມ ພວກເຂົາ ຢ່າງໃກ້ຊິດຫຼາຍໆເວລາ ພວກເຂົາຢູ່ ໃກ້ການຈະຣາຈອນ ແລະຂ້າມຖນົນ.

**ເວລາທ່ານຕັດສິນໃຈປ່ອຍໃຫ້ລູກທ່ານທີ່ມີອາຍຸເກີນ10ປີຍ່າງໄປແລະ ມາ ຈາກໂຮງຮຽນໂດຍໂຕເອງ: ຈົ່ງວາງ ແຜນການເດີນທາງ ນຳກັນ. ຝຶກຊ້ອມການເປັນຄົນຍ່າງແບບ ປອດໄພດ້ວຍການ:**

- ຍ່າງຂ້າງຊ້າຍຂອງທາງຍ່າງ
- ໃຫ້ຮູ້ໂຕຕໍ່ຣົດທີ່ເຂົ້າແລະອອກ ຕາມທາງຣົດເຂົ້າເຮືອນ
- ບໍ່ຖືກດຶງຄວາມສົນໃຈໂດຍອຸປະ ກອນຕ່າງໆຂອງໂທລະສັບມືຖື ຫຼື ໂດຍຄົນອື່ນ
- ໃນເວລາຝົນຕົກ ໃຫ້ໃຊ້ທາງອື່ນທີ່ ປອດໄພເພື່ອເມືອເຮືອນ
- ໃຫ້ຄວາມເຄົາຣົບຕໍ່ຄົນຍ່າງຄົນ ອື່ນໆ.

**ຢຸດ!** ຖອຍຫຼັງ ຈາກແຄມທາງກ້າວນຶ່ງ.
**ເບິ່ງ!** ເບິ່ງທັງສອງ ຂ້າງຕໍ່ໄປ.
**ຟັງ!** ສຽງຂອງຣົດທີ່ ພວມເຂົ້າມາໃກ້.
**ຄິດ!** ມັນປອດ ໄພບໍທີ່ຈະຂ້າມ?

**ຊຸກຍູ້ໃຫ້ລູກທ່ານ:**

- ໃຫ້ໃຊ້ບ່ອນທີ່ປອດໄພເລື້ອຍໆໃນ ການຂ້າມຖນົນ ເຊັ່ນທາງຂ້າມມ້າ ລາຍ, ໄຟຈາຣະຈອນ ຫຼື ບ່ອນຂ້າມ ຂອງໂຮງຮຽນ, ຖ້າຫາກມີ
- ໃຫ້ເບິ່ງວ່າມີຣົດລ້ຽວມາບໍກ່ອນ ພວກເຂົາຈະຂ້າມຖນົນແລະທາງ ຣົດເຂົ້າເຮືອນ
- ຢ່າຄິດວ່າຄົນຂັບຣົດຈະແນມເຫັນ ພວກເຂົາ ຫຼື ຈະຢຸດໃຫ້ພວກເຂົາ
- ເບິ່ງຕາຄົນຂັບຣົດເພື່ອພວກເຂົາຈະຮູ້ ວ່າຄົນຂັບຣົດໄດ້ເຫັນ ພວກເຂົາ
- ລໍຖ້າຈົນກວ່າຄົນຂັບຣົດໄດ້ຢຸດຣົດຄັກແນ່ກ່ອນພວກເຂົາຈະຂ້າມ ຖນົນ ຫຼື ທາງຣົດເຂົ້າເຮືອນ.

**ເພື່ອເອົາການອູ້ມຊູເພີ້ມຕື່ມ**

ເຂົ້າໄປເບິ່ງໂຄງການ ການສຶກສາ ເລື້ອງຄວາມປອດໄພຕາມທ້ອງ ຖນົນ ຂອງທາງກະຊວງ ທີ່:
https://education.nsw.gov.au/road-safety-education ຫຼືເປີດເຂົ້າເບິ່ງ
https://education.nsw.gov.au ແລະຊອກຫາເອົາ ການສຶກສາ ເລື້ອງ ຄວາມປອດໄພຕາມ ທ້ອງຖນົນ.

